

# ບົດສະເໜີໂຄງການຫຍໍ້
# ການຜະລິດໝາກກ້ຽງພື້ນເມືອງ
# ແບບຍືນຍົງ

# ການຜະລິດໝາກກ້ຽງພື້ນເມືອງແບບຍືນຍົງ.

## 1. ເປົ້າໝາຍ:

ເພື່ອພັດທະນາການຜະລິດໝາກກ້ຽງພື້ນເມືອງໃຫ້ມີຄຸນນະພາບສູງ, ມີຜົນກຳໄລ ແລະ ມີລະບົບນິເວດທີ່ຍືນຍົງ ທີ່ເປັນການປະກອບສ່ວນໂດຍກົງເຂົ້າໃນການລຶບລ້າງຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ ຂອງ ຊຸມຊົນຊາວພູດອຍ.
ເປົ້າໝາຍນີ້ຈະບັນລຸໄດ້ຍ້ອນການເສີມສ້າງຄວາມເຂັ້ມແຂງດ້ານຄວາມສາມາດໃຫ້ແກ່ຊາວກະສິກອນ, ເຮັດການຍົກລະດັບ ແລະ ຂະຫຍາຍການຕະຫລາດ ລວມທັງ ເຮັດການປັບປຸງແນວພັນໝາກກ້ຽງ.

## 2. ພາກສະເໜີລວມ:

ໝາກກ້ຽງ ມີຄວາມຫລາກຫລາຍດ້ານພື້ນຖານໂພຊະນາການທີ່ໜ້າປະທັບໃຈ, ມີ ວິຕາມິນຫລາຍຊະນິດ (C, A ແລະ B-complex), ມີ ແຮ່ທາດ (Potassium and Calcium) ເພື່ອການຈະເລີນເຕີບໂຕທີ່ດີຕໍ່ສຸກຂະພາບ ແລະ ຄວາມເປັນຢູ່ທີ່ດີ, ເພາະວ່າ ໝາກກ້ຽງມີລະດັບ calories ຕ່ຳ, ບໍ່ມີໄຂມັນອີ່ມຕົວ ຫລື cholesterol, ແຕ່ວ່າອຸດົມໄປດ້ວຍເສັ້ນໃຍອາຫານ ແລະ ສານຕ້ານອະນຸມູນອິດສະລະ..

ໝາກກ້ຽງ (Citrus Sinensis) ເປັນພັນໄມ້ຢືນຕົ້ນຢູ່ໃນເຂດຮ້ອນ ຫາ ອົບອຸ່ນ, ບໍ່ປ່ຽນໃບ, ມີດອກນ້ອຍ, ມີລຳຕົ້ນສູງ ປະມານ 5 ຫາ 8 ແມັດ ຖ້າຫາກບໍ່ໄດ້ມີການຕັດແຕ່ງ. ຕົ້ນໝາກກ້ຽງຈະອອກໝາກໜຶ່ງຄັ້ງປີ, ໝາກຈະມີຄວາມໃຫຍ່ຕາມເສັ້ນຜ່າສູນກາງ ເຖິງ 8 ຊັງຕີແມັດ ແລະ ມີນ້ຳໜັກເຖິງ 150 ກະລາມ. ຕົ້ນໝາກກ້ຽງ ໃນປະເທດລາວ ຈະເລີ້ມອອກດອກໃນເດືອນ ມັງກອນ ແລະ ໝາກຈະສຸກໃນ ເດືອນສິງຫາ ຫາ ເດືອນມັງກອນ ແຕ່ຂຶ້ນກັບສະຖານທີ່ຕັ້ງຂອງສວນ.



*ບໍ່ມີຄວາມຫຍຸ້ງຍາກຫຍັງຫລາຍ ທີ່ຈະຖືເອົາໝາກກ້ຽງໄປນຳທຸກບ່ອນທີ່ທ່ານໄປ ເພາະສາມາດກິນມັນໄດ້ໃນທຸກເວລາ ແລະ ຢູ່ທຸກບ່ອນຕາມທີ່ມີຄວາມສະດວກ, ພຽງແຕ່ລ້າງ ແລະ ປອກເປືອກມັນອອກແລ້ວກໍກິນໄດ້ເລີຍ!"*

## 3. ເບື້ອງຫລັງຄວາມເປັນມາ:

ປະຊາຊົນ ພາຍໃນ ເມືອງນ້ຳບາກ ແຂວງຫລວງພະບາງ ເປັນຜູ້ຜະລິດໝາກກ້ຽງພື້ນເມືອງທີ່ສຳຄັນກ່ວາໝູ່, ຊຶ່ງພວກເຂົາເຈົ້າໄດ້ເລີ້ມປູກສືບທອດກັນມາຈາກປູ່ຍ່າຕາຍາຍໄດ້ 300 ກ່ວາປີແລ້ວ, ດຽວນີ້ມີຫລາຍກ່ວາ 1,300 ຄອບຄົວ ພາຍໃນ 26 ບ້ານທີ່ໄດ້ປູກໝາກກ້ຽງ ໃນເນື້ອທີ່ທັງໝົດຫລາຍກ່ວາ 600 ເຮັກຕາ ເປັນສວນຢູ່ເລາະລຽບຕາມ ສາຍນ້ຳບາກ.

ໃນທົດສະວັດ ທີ່ຜ່ານມາ, ໄດ້ເກີດມີບັນຫາພະຍາດຕໍ່ກັບຕົ້ນໝາກກ້ຽງ ເປັນເຫດໃຫ້ມີຜົນຜະລິດໝາກກ້ຽງໜ້ອຍລົງ ແລະຄຸນນະພາບຕ່ຳລົງ. ເພາະວ່າ ປະຊາຊົນເຈົ້າຂອງສວນໝາກກ້ຽງຍັງພາກັນປະຕິບັດການຜະລິດຕາມຮູບແບບເກົ່າດັ້ງເດີມ ແລະບໍ່ເໝາະສົມແລ້ວກັບສະພາບປະຈຸບັນທີ່ບັນດາບໍລິໂພກຕ່າງໆກໍພາກັນຢາກກິນແຕ່ໝາກທີ່ມີຄຸນນະພາບສູງເທົ່ານັ້ນ.
ບັນຫາຂອງການຜະລິດໝາກກ້ຽງ ແມ່ນ:

- ບໍ່ມີລະບົບນ້ຳຊົນລະປະທານທີ່ພຽງພໍ;

- ບໍ່ໄດ້ໃສ່ຝຸ່ນຢ່າງພຽງພໍເໝາະສົມ (ໂດຍສະເພາະ ລະດູແລ້ງ ໃນເວລາທີ່ຕົ້ນໝາກກ້ຽງກຳລັງແຕກຍອດ, ອອກດອກ ແລະ ເປັນໝາກນ້ອຍ;
- ບໍ່ມີການຕັດແຕ່ງກິ່ງ, ປັບແຕ່ງເຮືອນຍອດ ແລະ ປ້ອງກັນຄວາມສ່ຽງ ເພື່ອຫລີກເວັ້ນຈາກຄວາມແອອັດຂອງການອອກດອກທີ່ເໝາະສົມ, ໃຫ້ການເຕີບໃຫຍ່ຂະຫຍາຍຕົວດີ ແລະ ຫລຸດຜ່ອນແຮງງານໃນການເກັບໝາກກ້ຽງ;
- ບໍ່ມີການສ້າງຕົ້ນແມ່ພັນ ແລະ ສວນກ້າທີ່ດີ
- ບໍ່ເຄີຍຕັດຕົ້ນເຖົ້າທີ່ມີອາຍຸສູງເກີນ 20 ປີ ແລະ ມີພະຍາດອອກຖົ້ມ ເພື່ອປູກຕົ້ນທີ່ແຂງແຮງປ່ຽນແທນ;
- ບໍ່ມີການຫົດນ້ຳ;
- ບໍ່ມີການເສຽຫຍ້າຂ້າຫຸ່ນ;
- ບໍ່ໄດ້ເຮັດການຄຸ້ມຄອງພູມສັນຖານອ້ອມຮອບໃກ້ຄຽງ ເພື່ອເຮັດໃຫ້ແມງໄມ້ທີ່ເປັນປະໂຫຍດ (ລວມທັງເຜີ້ງ) ໄດ້ຊ່ວຍເຂົ້າໃນການປ້ອງກັນພະຍາດຕ່າງໆ ແລະ ຮັບປະກັນໃຫ້ມີການປະສົມເກສອນດີຂຶ້ນ.

ດ້ວຍເຫດຜົນດັ່ງກ່າວນັ້ນ ຕົ້ນໝາກກ້ຽງຈຶ່ງມີຄວາມອ່ອນແອບໍ່ຕ້ານທານກັບໂລກພະຍາດສັດຕູພືດຕ່າງໆ (ມົດແມງ ແລະ ດ້ວງເຈາະລຳຕົ້ນເຮັດໃຫ້ນ້ຳຢາງໄຫລອອກ) ແລະ ຮັບຄວາມກົດດັນດ້ານສະພາບແວດລ້ອມຕ່າງໆ ຕໍ່ຕາມໄປຈຶ່ງເປັນການເຮັດໃຫ້ົນຜະລິດໝາກກ້ຽງບໍ່ໄດ້ຮັບຜົນດີທັງຈຳນວນ ແລະ ຄຸນນະພາບ.

ເລີ້ມແຕ່ປີ 2014 ໂຄງການຕາບີ ກໍໄດ້ເຂົ້າໄປໃຫ້ການຊ່ວຍເຫລືອ ແກ່ຊາວສວນໝາກກ້ຽງ 58 ຄອບຄົວ ຢູ່ 8 ບ້ານ ພາຍໃນເມືອງນ້ຳບາກ ແຂວງຫລວງພະບາງ ເພື່ອເຮັດການປັບປຸງວິທີການຜະລິດ  ໝາກກ້ຽງ ໃຫ້ໄດ້ຮັບປະລິມານຫລາຍຂຶ້ນ ແລະ ໃຫ້ມີຄຸນນະພາບດີຂຶ້ນ. ຊຶ່ງລວມມີ ການຜະລິດຕົ້ນພັນ, ການໃຫ້ນ້ຳ, ການເສຽຫຍ້າ, ການໃສ່ຝຸ່ນ, ການຕັດແຕ່ງກິ່ງງ່າ ແລະ ເຮືອນຍອດ, ການແກ້ໄຂ ແລະ ທຳລາຍພະຍາດບົ້ງແມງສັດຕູພືດ ຕ່າງໆ.



ໃນປີ 2018, ເຫັນໄດ້ວ່າ ຄອບຄົວປູກໝາກກ້ຽງທັງໝົດ 58 ຄອບຄົວນັ້ນ ໄດ້ມີອາຊີບປູກຕົ້ນໝາກກ້ຽງເປັນສິນຄ້າ ທັງໝົດ 31,600 ຕົ້ນ ຢູ່ໃນເນື້ອທີ່ 60 ha ໄດຮັບຜົນຜະລິດທັງໝົດ 512,350 kg (ສະເລ່ຽ 8.5 tons/ha). ຂາຍອອກຈາກສວນໃນລາຄາສະເລ່ຽ 2,000 Kips/kg, ສ້າງໃຫ້ມີລາຍຮັບທັງໝົດ 1,062,740,000 Kips (ຫລື 122,154 UDS) ຫລື ແຕ່ລະຄອບຄົວກໍຈະໄດ້ຮັບປະມານ 18 ລ້ານກີບ (ຫລື 2,000 UDS). ຕົວເລກນີ້ ຖ້າສົມທຽບໃສ່ກັບ ປີ 2017 ຜ່ານມາ ເຫັນວ່າ ໄດ້ລື່ນຫລາຍກ່ວາເກົ່າ 14% ທຽ-ໃສ່ເມືອງກ່ອນທີ່ ໂຄງການຕາບີ ຍັງບໍ່ທັນໄດ້ເຂົ້າໄປຊ່ວຍເຫລືອ.

ເຊັ່ນດຽວກັນ, ໂຄງການຕາບີ ກໍຍັງໄດ້ໃຫ້ການຊ່ວຍເຫລືອການຜະລິດໝາກກ້ຽງເປັນສິນຄ້າ ຢູ່ອີກສອງເມືອງ ຂອງ ແຂວງຊຽງຂວາງ ແລະ ອີກສອງເມືອງ ຂອງ ແຂວງຫົວພັນ.

ຕາມທີ່ ໂຄງການຕາບີ ໄດ້ໃຫ້ການຊ່ວຍເຫລືອນັ້ນ, ສາມາດສະຫລຸບລາຍຮັບຈາກການຜະລິດໃນປີ 2018 ໄດ້ຄື: (ກ) ແຂວງຊຽງຂວາງ (ເມືອງພູກູດ ແລະ ເມືອງຜາໄຊ): ມີທັງໝົດ 5 ບ້ານ, ຈຳນວນ 21 ຄອບຄົວ ປູກໝາກກ້ຽງໃນເນື້ອທີ່ 34 ha, ສາມາດ ເກັບກູ້ຜົນຜະລິດໄດ້ 48,726 kg (ສະເລ່ຽ 1,5 tons/ha). ຂາຍອອກໃນລາຄາ 6,000 Kips/kg, ໄດ້ຮັບເງິນທັງໝົດ 286,846,000 Kips (ຫລື 32,971 UDS) ສະເລ່ຽໃຫ້ແຕ່ລະຄອບຄົວ ຈະໄດ້ຫລາຍກ່ວາ 13 ລ້ານກີບ (ຫລື ຫລາຍກ່ວາ 1,500 UDS), ແລະ (ຂ) ຢູ່ ແຂວງຫົວພັນ (ເມືອງຊຳເໜືອ ແລະ ເມືອງກ້ວນ) ມີທັງໝົດຈຳນວນ 10 ບ້ານ ແລະ ມີຈຳນວນ 78 ຄອບຄົວ, ປູກໝາກກ້ຽງໃນເນື້ອທີ່ 37 ha, ເກັບກູ້ຜົນຜະລິດໄດ້ 49,669 kg (ສະເລ່ຽ 1,5 tons/ha). ຂາຍອອກໃນລາຄາ 4,000 Kips/kg, ໄດ້ຮັບເງິນທັງໝົດ 202,786,000 Kips (ຫລື 23,309 UDS). ສະເລ່ຽໃຫ້ແຕ່ລະຄອບຄົວ ກໍຈະໄດ້ຮັບຫລານຍກ່ວາ 2 ລ້ານກີບ (ຫລື ຫລາຍກ່ວາ 300 UDS).

ຕາມສະພາບການຕົວຈິງ, ພາຍຫລັງທີ່ໄດ້ເກັບເອົາໜ່ວຍເອົາໝາກກ້ຽງສຸກອອກຈາກຕົ້ນແລ້ວ ແມ່ນຍັງບໍ່ໄດ້ມີການຈຳແນກຈັດຊັ້ນຄຸນນະພາບ ແລະ ຍັງບໍ່ໄດ້ມີວິທີການຫຸ້ມຫໍ່ທີ່ດີເພື່ອສ້າງມູນຄ່າເພີ່ມແຕ່ຢ່າງໃດເລີຍກໍຕາມ ແຕ່ຜົນຜະລິດໝາກກ້ຽງທີ່ໄດ້ມາທັງໝົດນັ້ນ ກໍສາມາດຂາຍອອກໄດ້ໝົດ, ຍ້ອນວ່າ ມີຄວາມຕ້ອງການດ້ານຕະຫລາດບໍລິໂພກສູງສົມຄວນ ທັງຢູ່ພາຍໃນທ້ອງຖິ່ນ, ຕົວເມືອງ ແລະ ຕ່າງແຂວງ. ສຳລັບ ບັນຫາຂໍ້ຈຳກັດຕໍ່ກັບທ່າແຮງນີ້ທີ່ຕ້ອງໄດ້ແກ້ໄຂ ລວມມີ (ກ) ປະຊາຊົນຍັງມີຂໍ້ຈຳກັດດ້ານຄວາມຮູ້ ໃນການປັບປຸງວິທີການຜະລິດໝາກກ້ຽງ, (ຂ) ຍັງບໍ່ທັນໄດ້ຈັດຕັ້ງໃຫ້ເປັນການຜະລິດແບບກຸ່ມລວມໝູ່ ແລະ ຍັງບໍ່ທັນໄດ້ສ້າງເຄືອຂ່າຍທີ່ເຂັ້ມແຂງເທື່ອ, ເປັນ



ຜົນໃຫ້ມີການແລກປ່ຽນບົດຮຽນການພັດທະນາ ແລະ ບູລະນະຮັກສາສວນໝາກກ້ຽງໃຫ້ແກ່ກັນແລະກັນໜ້ອຍທີ່ສຸດ, (ຄ) ຜະລິດຕະພັນຍັງບໍ່ທັນໄດ້ຮັບການຢັ້ງຢືນຄຸນນະພາບ ແລະ ສ້າງເຄື່ອງໝາຍຍີ່ຫໍ້ການຄ້າເທື່ອ ເພື່ອເປັນການຮັບປະກັນດ້ານມາດຕະຖານ (ອິນຊີ ແລະ ສຸກຂະອານາໄມ), ແລະ (ງ) ຍັງບໍ່ທັນຕິດແໜ້ນກັບຂະບວນການຕ່ອງໂສ້ມູນຄ່າ ແລະ ການປຸງແຕ່ງພາຍຫລັງການເກັບກ່ຽວແລ້ວເທື່ອ (ການຈັດຊັ້ນຄຸນນະພາບ, ການຫຸ້ມຫໍ່, ການປຸງແຕ່ງ, ການຕະຫລາດ ແລະ ອື່ນໆ...).

## 4. ກິດຈະກຳຫລັກ:

- ດຳເນີນການເກັບກຳຂໍ້ມູນການຜະລິດ, ບັນຫາ, ລາຍຮັບ ຈາກການຜະລິດໝາກກ້ຽງເປັນສິນຄ້າໃນທົ່ວແຂວງ;
- ຄັດເລືອກເອົາຄອບຄົວຕົວແບບ ແລະ ສ້າງໃຫ້ເປັນຄູຝຶກທ້ອງຖິ່ນ;
- ສ້າງຕັ້ງກຸ່ມຜະລິດ ແລະ ສ້າງລະບຽບການຄຸ້ມຄອງ (ອາດມີການສ້າງຕັ້ງ ກອງທຶນອອມຊັບຊາວສວນໝາກກ້ຽງຂຶ້ນອີກ ຖ້າຫາກຊາວສວນໝາກກ້ຽງມີຄວາມຕ້ອງການຢາກເຮັດ);
- ຈັດຊຸດຝຶກອົບ ກ່ຽວກັບ "ວິທີການຜະລິດແບບໃໝ່ທີ່ດີກ່ວາເກົ່າ" ເຊັ່ນ: ລະບົບນ້ຳຊົນລະປະທານ, ການເສຽຫຍ້າຂ້າຫຸ່ນ, ການໃສ່ຝຸ່ນ, ການຕັດແຕ່ງກິ່ງ, ການປັບເຮືອນຍອດ, ການປ້ອງກັນຄວາມສ່ຽງ, ການປ້ອງກັນ ແລະ ຄວບຄຸມພະຍາດ ແລະ ສັດຕູພືດ, ການບູລະນະຕົ້ນແມ່ພັນ, ສວນຜະລິດເບ້ຍ (ກ້າແກ່ນ, ຕອນ, ສຽບງ່າ ແລະ ອື່ນໆ), ແລະ ການສ້າງມູນຄ່າເພີ່ມ (ການຈັດຄຸນນະພາບ, ການຫຸ້ມຫໍ່ ແລະ ການຕະຫລາດ ຕິດພັນກັບ ຕ່ອງໂສ້ມູນຄ່າ);
- ສ້າງແຜນການ ແລະ ປະຕິບັດວຽກງານການຜະລິດໝາກກ້ຽງພື້ນເມືອງຄຸນນະພາບເປັນສິນຄ້າ ຕາມລະບົບທີ່ດີກ່ວາເກົ່າທີ່ໄດ້ຮໍ່າຮຽນຝຶກອົບຮົມມາ ເພື່ອຫລຸດຜ່ອນຄວາມສ່ຽງ ແລະ ເຮັດໃຫ້ຕົ້ນໝາກກ້ຽງມີສຸກຂະພາບທີ່ດີ ສາມາດຜະລິດໝາກກ້ຽງເປັນສິນຄ້າມີຄຸນນະພາບດີໄດ້ຫລວງຫລາຍຂຶ້ນ;
- ຂະຫຍາຍຈຳນວນຊາວສວນຜະລິດໝາກກ້ຽງ ຢູ່ພາຍໃນແຂວງ ໂດຍການສ້າງໃຫ້ເປັນເຄືອຂ່າຍ ແລະ ມີຈຳນວນຊາວໜຸ່ມ ແລະ ແມ່ຍິງເຂົ້າຮ່ວມຫລາຍຂຶ້ນ ໃນວຽກງານສ້າງສວນກ້າຄອບຄົວ ແລະ ຂະຫຍາຍເນື້ອທີ່ສວນປູກໃໝ່ຕື່ມ;
- ຈັດການຢ້ຽມຢາມແລກປ່ຽນບົດຮຽນ ລະຫວ່າງພາຍໃນຊາວກະສິກອນກັນເອງ ແລະ ຈັດຂະບວນການຮຽນກັບໜ້າວຽກຕົວຈິງ ແລະ ອາດຈັດການທັດສະນະເບິ່ງວຽກການຕະຫລາດ ແລະ ການປຸງແຕ່ງໃນສະຖານທີ່ແຫ່ງອື່ນ;
- ສ້າງຕັ້ງເຄືອຂ່າຍການຜະລິດ ແລະ ການຕະຫລາດ ໂດຍສະເພາະແມ່ນ ກ່ຽວກັບ ກິດຈະກຳທຸລະກິດທີ່ເປັນການສ້າງມູນຄ່າເພີ່ມ (ການຈັດຊັ້ນຄຸນນະພາບ, ການຫຸ້ມຫໍ່ ແລະ ການຕະຫລາດ) ແລະ ເຮັດການປຶກສາຫາລືດ້ານສັກກາຍະພາບ ຫລືຄວາມເປັນໄປໄດ້ໃນການສ້າງອຸດສາຫະກຳປຸງແຕ່ງໃນອະນາຄົດ (ທຸລະກິດນ້ອຍເພື່ອຜະລິດນ້ຳໝາກກ້ຽງເປັນສິນຄ້າ).

## 5. ຄາດຄະເນຜົນໄດ້ຮັບ:



- ໄດ້ມີຄວາມເຂົ້າໃຈດີ ກ່ຽວກັບ ສະພາບການ ແລະ ສະຖານະການ ຜະລິດໝາກກ້ຽວພື້ນເມືອງເປັນສິນຄ້າ ລວມທັງ ການດຳລົງຊີວິດຂອງຊາວສວນ ໃນແຂວງເປົ້າໝາຍຈຸດສຸມ ແລະ ອາດນຳໃຊ້ເຂົ້າໃນການສ້າງເປັນແຜນການວຽກງານ ແລະ ສະໜັບສະໜູນໃຫ້ແກ່ການພັດທະນາສ້າງນະໂຍບາຍທ້ອງຖິ່ນ ແລະ ສູນກາງ;
- ໄດ້ຄັດເລືອກເອົາຄອບຄົວຕົວແບບ ແລະ ສ້າງໃຫ້ເປັນຄູຝຶກທ້ອງຖິ່ນ ລວມທັງໄດ້ສ້າງ ແລະ ເຜີຍແຜ່ເຄື່ອງມື ແລະ ບົດແນະນຳດ້ານວິຊາການຕ່າງໆສຳລັບຊາວກະສິກອນ;
- ໄດ້ສ້າງຕັ້ງກຸ່ມຜະລິດ ແລະ ສ້າງລະບຽບການຄຸ້ມຄອງ (ໄດ້ສ້າງຕັ້ງກອງທຶນອອມຊັບຊາວສວນໝາກກ້ຽງຂຶ້ນອີກ);
- ໄດ້ຈັດຊຸດຝຶກອົບ ກ່ຽວກັບ "ວິທີການຜະລິດແບບໃໝ່ທີ່ດີກ່ວາເກົ່າ" ເຊັ່ນ: ລະບົບນ້ຳຊົນລະປະທານ, ການກຳຈັດວັດສະພືດ, ການໃສ່ຝຸ່ນ, ການຕັດແຕ່ງກິ່ງ, ການປັບເຮືອນຍອດ, ການປ້ອງກັນຄວາມສ່ຽງ, ການປ້ອງກັນ ແລະ ຄວບຄຸມພະຍາດ ແລະ ສັດຕູພືດ, ການບູລະນະຕົ້ນແມ່ພັນ, ສວນຜະລິດເບ້ຽ (ກ້າແກ່ນ, ຕອນ, ສຽບງ່າ ແລະ ອື່ນໆ), ແລະ ການສ້າງມູນຄ່າເພີ້ມ (ການຈັດຄຸນນະພາບ, ການຫຸ້ມຫໍ່ ແລະ ການຕະຫລາດ ຕິດພັນກັບ ຕ່ອງໂສ້ມູນຄ່າ) ແລະ ຄວາມຮູ້ຂອງຊາວສວນກໍໄດ້ມີເພີ້ມຂຶ້ນ;
- ໄດ້ສ້າງແຜນການ ແລະ ໄດ້ປະຕິບັດວຽກງານການຜະລິດໝາກກ້ຽງພື້ນເມືອງຄຸນນະພາບເປັນສິນຄ້າ ຕາມລະບົບທີ່ດີກ່ວາເກົ່າທີ່ໄດ້ຮ່ຳຮຽນຝຶກອົບຮົມມາ ຈຶ່ງສາມາດຜະລິດໝາກກ້ຽງເປັນສິນຄ້າມີຄຸນນະພາບດີໄດ້ຫລວງຫລາຍຂຶ້ນ,ມີມູນຄ່າເພີ້ມຂຶ້ນ, ແລະ ມີການຮັກສາຕົ້ນແມ່ພັນທີ່ດີ ເພື່ອສືບຕໍ່ຂະຫຍາຍພັນປູກຕື່ມໃນໄລຍະຍາວ;
- ໄດ້ຂະຫຍາຍ ຈຳນວນ ຊາວສວນຜະລິດໝາກກ້ຽງ ຢູ່ພາຍໃນແຂວງ ໂດຍມີຈຳນວນຊາວໜຸ່ມ ແລະ ແມ່ຍິງເຂົ້າຮ່ວມຫລາຍຂຶ້ນ ໃນວຽກງານສ້າງສວນກ້າຄອບຄົວ ແລະ ຂະຫຍາຍເນື້ອທີ່ສວນປູກໃໝ່ຕື່ມ;
- ໄດ້ຈັດດການຢ້ຽມຢາມແລກປ່ຽນບົດຮຽນ ແລະ ຮຽນກັບວຽກຕົວຈິງ ພາຍໃນຊາວກະສິກອນກັນເອງ;
- ໄດ້ສ້າງຕັ້ງເຄືອຂ່າຍການຜະລິດ ແລະ ການຕະຫລາດ ໂດຍສະເພາະແມ່ນ ກ່ຽວກັບ ກິດຈະກຳທຸລະກິດທີ່ເປັນການສ້າງມູນຄ່າເພີ້ມ (ການຈັດຊັ້ນຄຸນນະພາບ, ການຫຸ້ມຫໍ່ ແລະ ການຕະຫລາດ) ແລະ ເຮັດການປຶກສາຫາລື ແລະ ວາງແຜນການຄວາມເປັນໄປໄດ້ໃນການສ້າງອຸດສາຫະກຳປຸງແຕ່ງໃນອະນາຄົດ (ທຸລະກິດນ້ອຍເພື່ອຜະລິດນ້ຳໝາກກ້ຽງເປັນສິນຄ້າ).

-----------------------------------------------------------------------------------

Note: *More detail can be provided if the organization/investor is interesting and Proposal Documentation can be developed for further consideration (if required).*